ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 39 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 21 ສິງຫາ 2017

ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 900
ວັນທີ 22 AUG 2017
ໂທລະສັບ 021 217770

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
ປະຈຳອາທິດທີ 07-11/08/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ການເຄື່ອນໄຫວວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,06% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກຈຳນວນຜູ້ຂໍສະຫວັດດີການຕໍ່ເນື່ອງ ຫຼຸດລົງເປັນ 1,95 ລ້ານຄົນ ຂອງອາທິດທີ 29/07/2017 ຈາກ 1,97 ລ້ານຄົນໃນອາທິດຜ່ານມາ ແລະ ຕົວເລກຍອດດຸນງົບປະມານຂອງເດືອນ 07/2017 ຫຼຸດລົງ ມາຢູ່ທີ່ ຂາດດຸນ 42,90 ຕື້ໂດລາສະຫະລັດ ຈາກຂາດດຸນ 90,20 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 31/07/-04/08/2017 | ອາທິດນີ້ 07-11/08/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1881 | 1,1756 | 1,06% |
| ເຢນ/ໂດລາ | 110,07 | 109,06 | 0,93% |
| ບາດ/ໂດລາ | 33,23 | 33,22 | 0,03% |
| ເປໂຊ/ໂດລາ | 50,20 | 50,98 | -1,53% |
| ຣູເປັຍ/ໂດລາ | 13.315 | 13.355 | -0,30% |
| ໂດລາສິງກະໂປ/ໂດລາ | 1,3557 | 1,3642 | -0,62% |
| ຢວນ/ໂດລາ | 6,7190 | 6,6655 | 0,80% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 2,21% ຈາກ 49,27 ໂດລາ/ບາເຣວ ມາເປັນ 48,18 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນຂອງສະຫະລັດຫຼຸດລົງ ຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 3,42 ລ້ານບາເຣວ ຂອງອາທິດທີ 04/08/2017;

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

- ສໍາລັບລາຄາຄໍາເພີ່ມຂຶ້ນ 1,48% ຈາກ 1.268,95 ໂດລາ/ອອນ ມາເປັນ 1.287,72 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ສັນຍາຊື້-ຂາຍຄໍາ ເພີ່ມຂຶ້ນ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜັນຜວນຂອງຄ່າເງິນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,06% ແລະ ອ່ອນຄ່າ 0,65% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 0,36% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 7,03% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 31/07/-04/08/2017 | | | ອາທິດນີ້ 07-11/08/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[2] | | | | | | | | | | | | |
| ໂດລາ | 8.340,60 | 8.380,00 | 8.360,53 | 8.345,86 | 8.391,48 | 8.365,89 | -0,06% | -0,14% | -0,06% | -0,35% | -0.44% | -0,36% |
| ບາດ | 249,79 | 251,48 | 250,68 | 250.98 | 252,84 | 252,31 | -0,47% | -0,54% | -0,65% | -6,93% | -7,01% | -7,03% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ຫຼຸດລົງ 1,41% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານ ມາ ເພີ່ມຂຶ້ນ 26,16%;
- ປະລິມານເງິນ M2 ຫຼຸດລົງ 0,36% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,52%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (04-10/08/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 6,96 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 50,22 ລ້ານໂດລາ ແລະ ຂາຍໂດລາໄດ້ 43,26 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.117,34 ລ້ານບາດ (ໃນນີ້ ຊື້ບາດໄດ້ 329,01 ລ້ານບາດ ແລະ ຂາຍບາດໄດ້ 1.446,35 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 32,86% ແລະ ເງິນບາດເພີ່ມຂຶ້ນ 10,74%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈໍານວນ 13,77 ລ້ານໂດລາ ແຕ່ຊື້ເງິນບາດສຸດທິ ຈໍານວນ 98,50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 1,81 ລ້ານໂດລາສະຫະລັດ ແລະ ເງິນບາດຈໍານວນ 13,90 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາສຸດທິ ຈໍານວນ 0,56 ລ້ານໂດລາ ແຕ່ເງິນບາດບໍ່ມີການເຄື່ອນໄຫວ.

[2] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 28/07/-03/08/2017 | | ອາທິດທີ 04-10/08/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **53,92** | **256,99** | **50,22** | **329,01** | **-0,53%** | **28,02%** |
| - ທ/ຄທຸລະກິດລັດ | 8,66 | 44,18 | 8,19 | 216,19 | -5,43% | 389,34% |
| - ທ/ຄທຸລະກິດອື່ນໆ | 41,83 | 212,81 | 42,03 | 112,82 | 0,48% | -46,99% |
| **2. ການຂາຍເງິນຕາຕ່າງປະເທດ** | **19,87** | **1.346,18** | **43,26** | **1.446,35** | **117,72%** | **7,44%** |
| - ທ/ຄທຸລະກິດລັດ | 9,48 | 122,44 | 12,74 | 92,73 | 34,39% | -24,26% |
| - ທ/ຄທຸລະກິດອື່ນໆ | 10,39 | 1.223,74 | 30,52 | 1.353,62 | 193,74% | 10,61% |
| **ຊື້-ຂາຍສຸດທິ ທທກ** | **30,62** | **-1.089,19** | **6,96** | **-1.117,34** | **-77,27%** | **2,58%** |
| - ຜິດດ່ຽງ ຊື້-ຂາຍ | 60,65% | -423,83% | 13,86% | -339,61% | -77,15% | -19,87% |
| - ມູນຄ່າການຊື້-ຂາຍ | **70,36** | **1.603,17** | **93,48** | **1.775,36** | **32,86%** | **10,74%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-11,97** | **-111,00** | **-13,77** | **98,50** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 174,00 | | |
| - ທຫລ ຂາຍໃຫ້ ທທກ | 11,97 | 111,00 | 13,77 | 75,50 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,17** | **26,73** | **1,81** | **13,90** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,49** | **0,00** | **0,56** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,49 | 0,00 | 0,56 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 08/2017 ຄາດວ່າຢູ່ໃນລະດັບ 0,11% ເພີ່ມຂຶ້ນຈາກ -0,03% ໃນເດືອນ 07/2017.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ຫຼຸດລົງ 3,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 37,51 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 6,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 70,45 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 812 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 174 ສະບັບ ເທົ່າກັບ 17,64% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 406,11 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 160,11 ຕື້ກີບ ເທົ່າກັບ 10,61% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (04-10/08/2017) ມີທັງໝົດ 3.080 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.045 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 113,37 ຕື້ກີບ ຈາກ 817,59 ຕື້ກີບ ມາເປັນ 704,22 ຕື້ກີບ ເທົ່າກັບ 13,86%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 35 ຄັ້ງ, ມູນຄ່າການໂອນໃນອາທິດ ເພີ່ມຂຶ້ນ 62,10 ຕື້ກີບ ຈາກ 34,96 ຕື້ກີບ ມາເປັນ 97,06 ຕື້ກີບ ເທົ່າກັບ 177,63%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.019,05 ຈຸດ ຫຼຸດລົງ 0,80% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 152.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 803,29 ລ້ານກີບ ຫຼຸດລົງ 4,52% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 45,80% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ **31/07/-04/08/2017** | ດັດຊະນີອາທິດທີ **07-11/08/2017** | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.027,23 | 1.019,05 | -0,80 | |

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)** (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 65.300 | 346.470.000 | 5.306 | 120.900 | 643.680.000 | 5.324 | 85,15 | 85,78 | 18 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 76.300 | 386.965.000 | 5.072 | 30.700 | 155.845.000 | 5.076 | -59,76 | -59,73 | 4 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.600 | - | - | 7.600 | - | - | - |
| ບໍລິສັດປີໂຕລ້ຽມເທຣດດິ້ງລາວ ມະຫາຊົນ | - | - | 2.000 | - | - | 2.000 | - | - | - |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | 37.200 | 107.880.000 | 2.900 | 1.300 | 3.770.000 | 2.900 | -96,51 | -96,51 | - |
| ທັງໝົດ | 178.800 | 841.315.000 | 4.705 | 152.900 | 803.295.000 | 5.254 | -14,49 | -4,52 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ກໍລະກົດ 2017 ທີ່ (ທຫລ); ❷ ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ, ວຽກງານຈຸດສຸມ 6 ເດືອນທ້າຍປີ 2017 ແລະ ການສ້າງແຜນປະຈຳປີ 2018 ທີ່ (ກະຊວງ

ແຜນການ ແລະ ການລົງທຶນ); ❸ ກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ ທີ່ (ທຫລ); ❹ ກອງປະຊຸມວັນຄົບຮອບ 25 ປີ ສາຍພົວພັນອາຊຽນ-ອິນເດຍ ທີ່ (ໂຮງແຮມເມືອງແທງ); ❺ ກອງປະຊຸມທາບທາມຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ ທີ່ (ທຫລ) ແລະ ❻ ສຳເລັດການຈັດສຳມະນາທາງດ້ານວິຊາການຮ່ວມກັບ IFC ກ່ຽວກັບການວາງແຜນຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິຫານ ທີ່ຈະຈັດຂຶ້ນໃນວັນທີ 16-17 ສິງຫາ 2017 ທີ່ (ໂຮງແຮມຄຣາວພລາຊາ).

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າຄູ່ມືໃນການພິຈາລະນາການຂໍສ້າງຕັ້ງທະນາຄານ ແລະ ສາຂາທະນາຄານ;
- ສືບຕໍ່ລົງຕິດຕາມກວດກາທະນາຄານຫຸ້ນສ່ວນການຄ້າທະຫານຫວຽດສາຂາລາວ, ທະນາຄານອຸດສາຫະກຳການຄ້າຈີນ ຈຳກັດ ແລະ ທະນາຄານການຄ້າສາກົນ ຈຳກັດ ປະຈຳປີ 2016;
- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມຮ່ວມກັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະບານ ທີ່ (ຫໍປະຊຸມແຫ່ງຊາດ); ❷ ກອງປະຊຸມປຶກສາຫາລື ກ່ຽວກັບການຫັນລະບົບການນຳໃຊ້ບັດຮ່ວມກັນລະຫວ່າງ ທະນາຄານທຸລະກິດດ້ວຍກັນໃນ ສປປ ລາວ (Laos ATM Pool switching: LAPS) ເປັນນິຕິ ບຸກຄົນ ທີ່ (ທຫລ); ❸ ກອງປະຊຸມຄະນະຄົ້ນຄວ້າຮ່າງດຳລັດສູນຂໍ້ມູນຂ່າວສານສິນເຊື່ອ (CIB) ທີ່ (ທຫລ); ❹ ກອງປະຊຸມປຶກສາຫາລື ກ່ຽວກັບບັນຊີກິດຈະການໆລົງທຶນຂອງ ສປປ ລາວ ທີ່ (ທຫລ) ແລະ ❺ ກອງປະຊຸມຄະນະກຳມະການເປີດເສລີທາງດ້ານການເງິນອາຊຽນ ຄັ້ງທີ 55 ໃນລະຫວ່າງວັນທີ 13-15 ສິງຫາ 2017 ທີ່ (ປະເທດ ອິນໂດເນເຊຍ);
- ສືບຕໍ່ຈັດກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ;
- ຄະນະຜູ້ວ່າການໄດ້ສືບຕໍ່ດຳເນີນການບຳລຸງສາພາຕ່າງປະເທດ ຢູ່ປະເທດສິງກະໂປ (ໄລຍະ 1 ເດືອນ);
- ກະກຽມຕ້ອນຮັບການມາຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງທ່ານ Wang Wentian ເອກອັກຄະລັດຖະທູດແຫ່ງ ສປ. ຈີນ, ຄະນະນຳຈາກໂຮງພິມຂອງທະນາຄານແຫ່ງຊາດ ກຳປູເຈຍ, ປະທານຜູ້ບໍລິຫານ ທະນາຄານ Well Fargo ປະຈຳຂົງເຂດອາຊີ-ປາຊີຟິກຄົນໃໝ່ ແລະ ທ່ານ Yue Yi ຜູ້ອຳນວຍການໃຫຍ່ ທະນາຄານແຫ່ງ ສປ. ຈີນ (ຮອງກົງ).

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ